# ຊຸມຊົນທ້ອງຖິ່ນ ນຳໃຊ້ ຫຼື ອາໄສຊັບພະຍາກອນປ່າໄມ້ ແລະ ຜົນຜະລິດປ່າໄມ້ ແນວໃດ?



# ຊຸມຊົນທ້ອງຖິ່ນ ນຳໃຊ້ ຫຼື ອາໄສຊັບພະຍາກອນປ່າໄມ້ ແລະ ຜົນຜະລິດປ່າໄມ້ ແນວໃດ?

## ເນື້ອໃນຂອງແຜ່ນໂຄສະນາ:

ຜູ້ຍິງ ແລະ ຜູ້ຊາຍໃນຊົນນະບົດ ມີຄວາມຮູ້ ແລະ ຄວາມຕ້ອງການຕໍ່ກັບການນຳໃຊ້ຊັບພະຍາກອນ ແລະ ຜົນຜະລິດປ່າໄມ້ ທີ່ແຕກຕ່າງກັນ

## ຄຳອະທິບາຍກ່ຽວກັບແຜ່ນໂຄສະນາ:

ທັງຜູ້ຊາຍ ແລະ ຜູ້ຍິງລ້ວນແລ້ວ ແຕ່ເພິ່ງພາອາໄສປ່າໄມ້ເພື່ອດຳລົງຊີບ ທັງທາງກົງ ແລະ ທາງອ້ອມ, ໂດຍສະເພາະ ແມ່ນຜູ້ທີ່ອາໄສຢູ່ໃນເຂດບໍລິເວນໃກ້ກັບປ່າໄມ້ ຍິ່ງຕ້ອງອາໄສປ່າໄມ້ໃນການດຳລົງຊີວິດ ໃນແຕ່ລະມື້. ຜູ້ຍິງ ເຮັດວຽກທີ່ກ່ຽວຂ້ອງກັບການຜະລິດ ແລະ ຮັບຜິດຊອບໃນການລ້ຽງດູເບິ່ງແຍງລູກ ແລະ ສະມາຊິກໃນຄອບຄົວ, ດູແລຄອບຄົວເຮືອນຊານ ພ້ອມທັງຮັບຜິດຊອບໃນການຫາອາຫານ ແລະ ແຕ່ງຢູ່ຄົວກິນໃນຄອບຄົວ, ໃນຄະນະດຽວກັນ ຜູ້ຊາຍ ເຮັດວຽກກ່ຽວກັບການຜະລິດ ແລະ ຮັບຜິດຊອບໃນການຫາລາຍໄດ້ໃຫ້ຄອບຄົວ ທັງຜູ້ຍິງ ແລະ ຜູ້ຊາຍເກັບເຄື່ອງປ່າຂອງດົງ ສ່ວນໃຫຍ່ ເພື່ອຊົມໃຊ້ໃນຄອບຄົວ ແຕ່ຖ້າເກັບເພື່ອຂາຍເປັນສິນຄ້າແລ້ວ ຜູ້ຊາຍຈະເກັບເອົາໄປຂາຍຫຼາຍກວ່າຜູ້ຍິງ

## ປະເດັນສຳຄັນ ທີ່ຜູ້ອຳນວຍຄວາມສະດວກ ຄວນຈະນຳໄປຖ່າຍທອດ

- ຜູ້ຊາຍ ແລະ ຜູ້ຍິງມີຄວາມຕ້ອງການ ແລະ ຄວາມຮູ້ ທີ່ແຕກຕ່າງກັນ ກ່ຽວກັບການນຳໃຊ້ຊັບ ພະຍາກອນ ແລະ ຜະລິດຕະພັນປ່າໄມ້.
- ຜູ້ຊາຍ ມັກເຂົ້າປ່າຂຸດຄົ້ນໄມ້ ເພື່ອເປັນລາຍໄດ້.
- ຜູ້ຍິງ ມັກເກັບເຄື່ອງປ່າຂອງດົງ ເຊັ່ນ: ເກັບຜັກຫັກຫນໍ່, ສະຫມຸນໄພ, ເຫັດ, ຫມາກໄມ້ປ່າ, ຢາພື້ນເມືອງ, ຫາໄມ້ຟືນ, ກ່ຽວຫຍ້າມຸງເຮືອນ ແລະ ຕັດໄມ້ສຳລັບເຮັດຮົ້ວ ແລະ ອື່ນໆເປັນຕົ້ນ.
- ເພາະສະນັ້ນ ຜູ້ຍິງມັກຈະເປັນຜູ້ຮູ້ ກ່ຽວກັບຄວາມຫລາກຫລາຍຂອງປ່າໄມ້ ພ້ອມທັງຄວາມກ່ຽວຂ້ອງຕໍ່ກັບການດຳລົງຊີວິດປະຈຳວັນຂອງເຂົາເຈົ້າ ໄດ້ດີກວ່າຜູ້ຊາຍ

**ຫມາຍເຫດ:**

*ເນື້ອໃນແຜ່ນໂຄສະນາ ເປັນພຽງຂໍ້ແນະນຳສຳລັບຜູ້ອຳນວຍຄວາມສະດວກຂັ້ນຮາກຖານເທົ່ານັ້ນ. ເພື່ອນຳໃຊ້ແຜ່ນໂຄສະນານີ້ໃນການຝຶກອົບຮົມຂັ້ນຮາກຖານ, ຜູ້ອຳນວຍຄວາມສະດວກ ສາມາດປັບໃຊ້ໄດ້ຕາມສະຖານະການຕົວຈິງໃນທ້ອງຖິ່ນ.*

ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບການປັບປຸງ ແລະ ປະຊາຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມ ໃນການດັດແປງພື້ນທີ່ປ່າໄມ້ ໃນເຂດພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

ການເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ

ສະຫງວນລິຂະສິດ © ອົງການ RECOFTC ເດືອນຕຸລາ 2015

ບາງກອກ ປະເທດ ໄທ

ແຕ້ມໂດຍ: ທ່ານນາງ ຈູທາມາສ ປຣະມູນມາກ

ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ສຳລັບຂໍ້ມູນລາຍລະອຽດ, ກະລຸນາຕິດຕໍ່
ອົງການ RECOFTC ປະຈຳ ສປປ ລາວ
ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ
ຫມາຍເລກໂທລະສັບ: 856 21 219512 ເວັບໄຊທ: www.recoftc.org

Norad

THE CENTER FOR PEOPLE AND FORESTS